# 4.2 ນະໂຍບາຍດ້ານສິ່ງແວດລ້ອມ

## ຈຸດປະສົງ ແລະ ລັກສະນະສຳຄັນ ຂອງນະໂຍບາຍດ້ານສິ່ງແວດລ້ອມ

ນະໂຍບາຍດ້ານສິ່ງແວດລ້ອມ ແມ່ນພື້ນຖານລະບົບການຈັດການດ້ານສິ່ງແວດລ້ອມຂອງອົງການຈັດຕັ້ງ. ຍິ່ງຖືສຳຄັນມາດຖານ ISO 14001 ເທົ່າໃດ, ທຸກຄຳຕັດສິນ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງຕ້ອງໃຫ້ເໝາະສົມກັບນະໂຍບາຍດ້ານສິ່ງແວດລ້ອມສະເໝີ ເພື່ອຜົນສຳເລັດຕາມນະໂຍບາຍທີ່ກຳນົດໄວ້. ໂດຍອີງໃສ່ນະໂຍບາຍດ້ານສິ່ງແວດລ້ອມ, ນາຍທະບຽນ ແລະ ຜູ້ກວດກາຜູ້ອື່ນຈະເປັນຜູ້ຢັ້ງຢືນຜົນສຳເລັດຂອງລະບົບການຈັດການດ້ານສິ່ງແວດລ້ອມຂອງອົງການຈັດຕັ້ງ.

**ISO 14001 ຂໍ້ທີ 4.2 ວ່າດ້ວຍນະໂຍບາຍດ້ານສິ່ງແວດລ້ອມເວົ້າວ່າ:**

ຜູ້ຈັດການລຳດັບສູງຄວນນິຍາມນະໂຍບາຍດ້ານສິ່ງແວດລ້ອມຂອງອົງການຈັດຕັ້ງ ແລະ ຮັບປະກັນວ່າ:

ກ. ນະໂຍບາຍແທດເໝາະກັບທຳມະຊາດ, ລະດັບຂັ້ນ ແລະ ການກະທົບທາງທຳມະຊາດຂອງກິດຈະກຳ, ຜະລິດຕະພັນ, ຫຼືການບໍລິການ.

ຂ. ມັນບັນຈຸຄຳໝັ້ນສັນຍາໃນການບຳລຸງຮັກສາແລະການປ້ອງກັນມົນລະພິດຢ່າງຕໍ່ເນື່ອງ.

ຄ. ບັນຈຸຄຳໝັ້ນສັນຍາທີ່ຕ້ອງຍອມປະຕິບັດຕາມຂໍ້ກຳນົດກົດລະບຽບດ້ານສິ່ງແວດລ້ອມ ແລະ ເງື່ອນໄຂອື່ນໆທີ່ອົງການຈັດຕັ້ງໄດ້ເຫັນດີເຫັນພ້ອມ.

ງ. ສະໜອງຂອບເຂດວຽກງານເພື່ອຈັດວາງ ແລະ ທົບທວນຄືນບັນດາຈຸດປະສົງ ແລະ ເປົ້າໝາຍດ້ານສິ່ງແວດລ້ອມ.

ຈ. ຢືນຢັນດ້ວຍເອກະສານ, ລົງມືປະຕິບັດ, ບຳລຸງຮັກສາ ແລະ ເຜີຍແຜ່ສູ່ລູກຈ້າງທຸກຄົນຢ່າງທົ່ວເຖິງ.

ສ. ເປັນປະໂຫຍດສຳລັບສາທາລະນະ.

ນະໂຍບາຍດ້ານສິ່ງແວດລ້ອມ ຕ້ອງສະທ້ອນໃຫ້ເຫັນທັດສະນະ, ຄວາມມຸ່ງຫວັງ, ປັດຊະຍາ, ຄຸນຄ່າ ແລະ ຄວາມເຊື່ອຂອງອົງການຈັດຕັ້ງທີ່ນັບຖືທຳມະຊາດ. ຜູ້ຈັດການລະດັບສູງຕ້ອງອຸທິດຄວາມນຶກຄິດ ແລະ ຄວາມສຳນຶກສ່ວນໃຫ່ຍເຂົ້າໃສ່ການພັດທະນາ ແລະ ເພີ່ມສີສັນໃຫ້ແກ່ ນະໂຍບາຍໃນ ເມື່ອອັນນີ້ມັນໄດ້ກາຍເປັນຫຼັກການໃນການຄຶງຕົວ ແລະ ການດຳເນີນວຽກງານຂອງອົງການຈັດຕັ້ງ. ນະໂຍບາຍຄວນເປັນປະໂຫຍດ ແລະ ເປັນທີ່ກະຕຸ້ນໃຈ ໃນເມື່ອມັນໄດ້ກຳນົດໂຄງຮ່າງ ແລະ ທິດທາງໃຫ້ແກ່ທຸລະກິດ, ໃຫ້ແກ່ການຕັດສິນທາງດ້ານວິຊາການເຕັກນິກ ແລະ ການກະທຳ, ແລະ ພ້ອມດຽວກັນນັ້ນ ກໍກະຕຸ້ນ ແລະ ຊຸກຍູ້ສະມາຊິກຂອງອົງ ການຈັດຕັ້ງທຸກຄົນເພື່ອຜົນສຳເລັດອັນດີໃນວຽກງານດ້ານສິ່ງແວດລ້ອມ.

## ຄຳອະທິບາຍກ່ຽວກັບນະໂຍບາຍດ້ານສິ່ງແວດລ້ອມ ISO 14001 :

ມາດຖານ ISO 14001 ໄດ້ລະບຸຂໍ້ບັງຄັບຫຼາຍຢ່າງສຳລັບການພັດທະນາ, ເນື້ອໃນໃຈຄວາມ, ຈຸດມຸ່ງໝາຍ ແລະ ການປະຕິບັດຕົວຈິງ ຂອງນະໂຍບາຍດ້ານຍສິ່ງແວດລ້ອມ ດັ່ງນີ້:

- ຜູ້ຈັດການໃນລະດັບສູງຕ້ອງມີຄວາມຮັບຜິດຊອບແລະສາມາດຊີ້ແຈງໄດ້ໃນການນິຍາມນະໂຍບາຍດ້ານສິ່ງແວດລ້ອມຂອງອົງການຈັດຕັ້ງ. ຢ່າງນ້ອຍພວກເຂົາຕ້ອງທົບທວນຄືນ, ຮັບຮອງ ແລະ ຮັບປະກັນ ເພື່ອບຳລຸງຮັກສານະໂຍບາຍດ້ານສິ່ງແວດລ້ອມທີ່ໄດ້ຮັບການພັດທະນາຂຶ້ນມາເພື່ອຄວາມມຸ້ງຫວັງຂອງຕົນ. ຜູ້ຈັດການຜູ້ອື່ນໃນອົງການຈັດຕັ້ງຈະເປັນຜູ້ລວບລວມຮ່າງນະໂຍບາຍເພື່ອໃຫ້ຜູ້ຈັດການອາວຸໂສມີຄຳເຫັນປະກອບແລະກວດແກ້.ເຖິງຢ່າງໃດກໍຕາມ, ຄວາມຮັບຜິດຊອບສູງສຸດໃນການນິຍາມນະໂຍບາຍນີ້ກໍຍັງເປັນຄວາມຮັບຜິດຊອບຂອງຜູ້ຈັດການລະດັບສູງຂອງກຸ່ມ.

- ນະໂຍບາຍຕ້ອງກວມເອົາຂອບເຂດການເຄື່ອນໄຫວຂອງອົງການຈັດຕັ້ງຢ່າງຄົບຖ້ວນ, ເຊິ່ງລວມມີ ສະຖານທີ່ທີ່ເໝາະສົມ, ການໄດ້ມາເຊິ່ງວັດຖຸດິບ, ການຂົນສົ່ງ, ການຫຸ້ມຫໍ່ ແລະການຂົນສົ່ງຜົນຜະລິດ, ເຊິ່ງລວມທັງທຸກການເຄື່ອນໄຫວໃນພາກສະໜາມທີ່ອາດຈະມີຜົນກະທົບຕໍ່ສິ່ງແວດລ້ອມ.
- ນະໂຍບາຍຕ້ອງບັນຈຸ ຄຳໝັ້ນສັນຍາໃຈກາງ 3 ປະການ ທີ່ເປັນຄວາມຕ້ອງການທີ່ຂາດບໍ່ໄດ້ຂອງ ISO 14001 ຄື:

  – ຄຳໝັ້ນສັນຍາທີ່ຈະປັບປຸງ EMS ແລະການເຄື່ອນໄຫວດ້ານສິ່ງແວດລ້ອມຢ່າງຕໍ່ເນື່ອງ.

  – ຄຳໝັ້ນສັນຍາໃນການປ້ອງກັນສະພາວະມົນລະພິດ (ເຊັ່ນ ອັນນີ້ໝາຍເຖິງການຈັດທຸກຈັ້ນຕອນທີ່ເໝາະສົມເພື່ອລົບລ້າງ ຫຼື ຢ່າງນ້ອຍ ກໍລຸດຜ່ອນສະພາວະມົນລະພິດ).

  – ຄຳໝັ້ນສັນຍາ ໃນການຍອມນັບຖືກົດໝາຍແລະ ກົດລະບຽບທີ່ສຳຄັນດ້ານສິ່ງແວດລ້ອມ ແລະ ຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆທີ່ອົງການຈັດຕັ້ງເຫັນດີເຫັນພ້ອມນຳ.ເນື້ອໃນຂ້າງເທິງນີ້ ໝາຍເຖິງ ອົງການຈັດຕັ້ງໄດ້ໃຫ້ຄຳໝັ້ນສັນຍາໃນການຕອບສະໜອງຕາມມາດຕະຖານດ້ານກົດໝາຍກ່ຽວກັບສິ່ງແວດລ້ອມ ປະຈຳທ້ອງຖິ່ນ, ຂົງເຂດ ແລະ ຂອງຊາດ. ພ້ອມກັນນັ້ນ ອົງການຈັດຕັ້ງ ຕ້ອງໃຫ້ຄຳໝັ້ນສັນຍາໃນການຍອມຮັບເງື່ອນໄຂທີ່ບໍ່ເປັນທາງກົດໝາຍອື່ນໆ ເຊັ່ນ ຄຳໝັ້ນສັນຍາດ້ານສິ່ງແວດລ້ອມທີ່ມີຂື້ນໃນບັນດາໝູ່ສະມາຊິກຂອງສະມາຄົມອຸດສາຫະກຳ, ຄຳຕົກລົງກັບລັດຖະບານ ຫຼື ຜູ້ຮ່ວມຫຸ້ນ, ນະໂຍບາຍພາຍໃນບໍລິສັດ ແລະ ວິທີດຳເນີນວຽກງານ.

4. ນະໂຍບາຍ ຕ້ອງໃຫ້ທິດທາງ ແລະ ໂຄງຮ່າງເພື່ອການຂະຫຍາຍຕົວໂດຍຜ່ານຈຸດປະສົງ ແລະ ເປົ້າໝາຍໃໝ່ດ້ານສິ່ງແວດລ້ອມທີ່ຈະຖືກຈັດຂື້ນໃນເວລາທີ່ນຳເອົາ EMS ໄປປະຕິບັດ ແລະ ບຳລຸງຮັກສາ.
5. ນະໂຍບາຍ ຕ້ອງສາມາດຢືນຢັນດ້ວຍເອກະສານ, ສິ່ງທີ່ ISO ເວົ້າ "ໃນການຂຽນ", ແລະ ນະໂຍບາຍ ຕ້ອງຖືກນຳເອົາໄປປະຕິບັດໃນການດຳເນີນວຽກງານປະຈຳວັນຂອງEMS.

- ນະໂຍບາຍ ຕ້ອງຖືກບຳລຸງຮັກສາ, ສຳນວນອັນອື່ນຂອງ ISO ແມ່ນການປັບປຸງ ແລະ ການເຮັດໃຫ້ເໝາະສົມກັບສະພາບການດຳເນີນງານ ແລະ ກັບເງື່ອນໄຂໃນປະຈຸບັນ.
- ນະໂຍບາຍ ຈະຕ້ອງຖືກເຜີຍແຜ່ ໃຫ້ສື່ວເຖິງລູກຈ້າງທຸກຄົນ. ອັນນີ້ ມັນສະແດງເຖິງ ຄວາມຕັ້ງໃຈທີ່ຫ້າວຫັນ ແລະ ມີຊີວິດຊີວາຂອງອົງການຈັດຕັ້ງ ທີ່ນຳພາໂດຍຜູ້ຈັດການລະດັບສູງ ໃນການຮັບປະກັນໃຫ້ພະນັກງານທຸກຄົນຮູ້ຈັກ, ເຂົ້າໃຈ, ຊາບຊຶມ ແລະ ປະຕິບັດບັນດາຫຼັກການ, ຄວາມຄິດ ແລະ ຄຳໝັ້ນສັນຍາຕ່າງໆທີ່ກຳນົດຢູ່ໃນນະໂຍບາຍ. ອົງການຈັດຕັ້ງອາດນຳໃຊ້ຫຼາຍໆວິທີ ແລະ ເຕັກນິກເພື່ອເຜີຍແຜ່ນະໂຍບາຍດ້ານສິ່ງແວດລ້ອມ ແລະ ເນັ້ນໜັກຫຼັກການຕ່າງໆທີ່ນະໂຍບາຍໄດ້ກຳນົດໄວ້.
- ນະໂຍບາຍຕ້ອງເປັນປະໂຫຍດແກ່ສາທາລະນະ, ເຊັ່ນວ່າ ນະໂຍບາຍຕ້ອງເປັນທີ່ເຂົ້າຫາໄດ້ສຳລັບສະມາຊິກທຸກໆຄົນຂອງສາທາລະນະທີ່ມຸ້ງຫວັງຢາກຈະຮູ້ຈັກນະໂຍບາຍນັ້ນ. ISO 14001 ບໍ່ຮຽກຮ້ອງໃຫ້ອົງການຈັດຕັ້ງເຜີຍແຜ່ນະໂຍບາຍຢ່າງຫ້າວຫັນ, ແຕ່ວ່າ ຖ້າຫາກ ນະໂຍບາຍໄດ້ຮັບການພັດທະນາຢ່າງຖືກຕ້ອງ, ບໍລິສັດຄວນມີຄວາມພູມໃຈທີ່ໄດ້ສະແດງ ແລະ ໂຄສະນາເຜີຍແຜ່ນະໂຍບາຍສູ່ທຸກໆຄົນ ເພື່ອໃຫ້ເຫັນໄດ້ຄຸນຄ່າຄຳໝັ້ນສັນຍາຂອງມັນ.

ເພີ້ມເຕີມໃສ່ເງື່ອນໄຂສຳຄັນຕ່າງໆຂອງນະໂຍບາຍດ້ານສິ່ງແວດລ້ອມ ທີ່ໄດ້ສັງລວມດັ່ງຂ້າງເທິງນັ້ນ, ແນວຄວາມຄິດຢ່າງອື່ນທີ່ອາດຈະຮວມເຂົ້າກັບນະໂຍບາຍຕົ້ນ ມີຄື:

- ຫຼັກການການພັດທະນາແບບຍືນຍົງ, ການຈັດສັນຊັບພະຍາກອນຄືນໃໝ່ ແລະ ການປົກປັກຮັກສາຄວາມຫຼາກຫຼາຍທາງຊີວະສາດ.
- ຄຳໝັ້ນສັນຍາໃນການນຳໃຊ້ເຕັກໂນໂລຍີ ແລະ ອຸປະກອນ ທີ່ມີປະສິດທິຜົນທີ່ສຸດ ໃນການກຳຈັດພາວະມົນລະພິດ, ໂດຍສອດຄ່ອງກັບປະສິດທິຜົນທາງເສດຖະກິດຂອງທຸລະກິດ ( ເຊັ່ນວ່າ BEAT- ເຕັກໂນໂລຊີທີ່ໃຫ້ຜົນສຳເລັດສູງສຸດທາງເສດຖະກິດ)

• ນຳໃຊ້ ຕົວຊີ້ບອກຜົນງານດ້ານສິ່ງແວດລ້ອມ ເພື່ອຊຸກຍູ້ການຂະຫຍາຍຕົວທາງດ້ານປະລິມານ.

• ຄວາມຄິດກ່ຽວກັບວົງຈອນຊີວິດ- ການຄຳນຶງເຖິງຜົນກະທົບຂອງຜະລິດຕະພັນ "ແຕ່ເກີດຈົນເຖິງຕາຍ" ເຊິ່ງອັນນີ້ອາດຮຽກຮ້ອງໃຫ້ອົງການຈັດຕັ້ງປະເມີນຜົນກະທົບແບບສະສົມທີ່ມາຈາກທຸກໄລຍະ, ທີ່ມາຈາກການອອກແບບຜະລິດຕະພັນ, ມາຈາກການໄດ້ມາເຊິ່ງວັດຖຸດິບ, ວິວັດທະນາການເພື່ອສຳເລັດການຜະລິດ, ການຫຸ້ມຫໍ່, ການຂົນຖ່າຍ, ການສິ້ນສຸດການນຳໃຊ້ ແລະ ການນຳໃຊ້ຄືນໃໝ່, ການໝູນວຽນມາໃຊ້ອີກ ຫຼືການຖິ້ມເປັນຂີ້ເຫຍື້ອ.

ເພື່ອນຳເອົາ ທຸກໆຂໍ້ຄວາມໃນມາດຕະຖານນີ້ໄປສູ່ການປະຕິບັດທີ່ເກີດດອກອອກຜົນນັ້ນ ມັນມີຄວາມສຳຄັນທີ່ຕ້ອງມີການຈັດວາງຄວາມຮັບຜິດຊອບຢ່າງຈະແຈ້ງເພື່ອການພັດທະນາ, ການຮັບຮອງ, ການອະທິບາຍ, ການເຜີຍແຜ່, ການລົງມືປະຕິບັດ, ການບຳລຸງຮັກສາ ແລະການທົບທວນຄືນໃນກໍລະນີຈຳເປັນ ກ່ຽວກັບນະໂຍບາຍດ້ານສິ່ງແວດລ້ອມນີ້.

ເຖິງແມ່ນວ່າ ນະໂຍບາຍດ້ານສິ່ງແວດລ້ອມ ແມ່ນອົງປະກອບທຳອິດຂອງ ISO 14001, ອົງການຈັດຕັ້ງອາດມີຄວາມລະມັດລະວັງໃນການເລື່ອນການສ້າງຂໍ້ຄວາມຂອງນະໂຍບາຍໃຫ້ຈົບ ຈົນກ່ວາວຽກງານໄດ້ຮັບການລົງມືປະຕິບັດເພື່ອກຳນົດຂອບເຂດການກະທົບຕໍ່ສິ່ງແວດລ້ອມອັນເນື່ອງມາຈາກການປະຕິບັດງານ, ການວາງແຜນອັນອື່ນ ແລະ ການກະກຽມເບື້ອງຕົ້ນ ເພື່ອໃຫ້ EMS ໄດ້ຮັບການປະຕິບັດ. ອັນນີ້ ຈະຊ່ວຍຮັບປະກັນໃຫ້ນະໂຍບາຍເປັນທີ່ເຊື່ອຖືໄດ້ ແລະ ແທດເໝາະກັບຈຸດປະສົງຂອງອົງການຈັດຕັ້ງ.

## ນະໂຍບາຍດ້ານສິ່ງແວດລ້ອມ-ແບບຢ່າງຂອງບໍລິສັດຜະລິດຕະພັນປ່າໄມ້:

ພວກເຮົາຈຳເປັນຕ້ອງເອົາໃຈໃສ່ຕໍ່ຄວາມຍືນຍົງຂອງສິ່ງແວດລ້ອມ ໂດຍຜ່ານການປະຕິບັດງານຂອງພວກເຮົາ. ພວກເຮົາຈະ:

- ເຄົາລົບຫຼືຍົກສູງເງື່ອນໄຂຕ່າງໆ ດ້ານກົດໝາຍ.
- ເຄົາລົບເງື່ອນໄຂຕ່າງໆດ້ານສິ່ງແວດລ້ອມທີ່ບໍລິສັດໄດ້ໃຫ້ຄຳໝັ້ນສັນຍາໄວ້.
- ວາງ ແລະ ທົບທວນຄືນບັນດາຈຸດປະສົງ ແລະ ເປົ້າໝາຍດ້ານສິ່ງແວດລ້ອມ ເພື່ອປ້ອງກັນພາວະມົນລະພິດ ແລະ ເພື່ອສຳເລັດການປັບປຸງຢ່າງຕໍ່ເນື່ອງໃນການປະຕິບັດງານດ້ານສິ່ງແວດລ້ອມ.
- ສ້າງໂອກາດ ສຳລັບພາກສ່ວນຕ່າງໆທີ່ມີຄວາມສົນໃຈຢາກມີສ່ວນປະກອບໃນການວາງແຜນກິດຈະກຳດ້ານປ່າໄມ້ຂອງພວກເຮົາ.
- ດຳເນີນການຄຸ້ມຄອງທີ່ເອົາໃຈໃສ່ຕໍ່ລະບົບນິເວດວິທະຍາ ແລະ ຄວາມຫລາກຫລາຍຕ່າງໆ, ແລະ ສະໜັບສະໜູນການນຳໃຊ້ປ່າໄມ້ແບບປະສົມປະສານ.
- ສົ່ງເສີມຄວາມຮັບຮູ້ ແລະ ຄວາມເອົາໃຈໃສ່ຕໍ່ສິ່ງແວດລ້ອມ ໂດຍຜ່ານການປະຕິບັດງານຂອງພວກເຮົາ.
- ດຳເນີນການກວດກາ ລະບົບການຄຸ້ມຄອງດ້ານສິ່ງແວດລ້ອມຂອງພວກເຮົາເປັນປົກກະຕິ.
- ເຜີຍແຜ່ການປະຕິບັດງານດ້ານສິ່ງແວດລ້ອມຂອງພວກເຮົາຕໍ່ ຄະນະອຳນວຍການ, ຜູ້ຖືຫຸ້ນ, ລູກຈ້າງ, ລູກຄ້າ ແລະ ພາກສ່ວນຕ່າງໆທີ່ມີຄວາມສົນໃຈ.

## ສະຫຼຸບສັງລວມຈຸດສຳຄັນຕ່າງໆ:

- ນະໂຍບາຍດ້ານສິ່ງແວດລ້ອມຂອງອົງການຈັດຕັ້ງ ແມ່ນເຂັມທິດເນືອງທາງໃຫ້ແກ່ລະບົບການຄຸ້ມຄອງ ດ້ານສິ່ງແວດລ້ອມ. ມັນແມ່ນແສງໄຟເບືອງທາງ ແລະ ກວດແກ້ໃນການຕັດສິນໃຈ ແລະ ການກະທຳທຸກຢ່າງທາງທຸລະກິດ.
- ນະໂຍບາຍດ້ານສິ່ງແວດລ້ອມ ຕ້ອງນຳໄປເຖິງ ຄຸນຄ່າ ແລະ ຄຳໝັ້ນສັນຍາຂອງອົງການຈັດຕັ້ງ ໃນການປະຕິບັດງານດ້ານສິ່ງແວດລ້ອມ.
- ນະໂຍບາຍຕ້ອງຈະແຈ້ງ, ກະທັດຮັດ, ໃຊ້ການໄດ້, ເປັນທີ່ລະດົມຈິດໃຈ ເຊິ່ງຊີ້ໃຫ້ເຫັນ ຫຼັກການ, ຄຸນຄ່າ, ແລະ ຄວາມຕັ້ງໃຈຕໍ່ສິ່ງແວດລ້ອມ.
- ນະໂຍບາຍດ້ານສິ່ງແວດລ້ອມ ຄວນປະກອບເພີ່ມເຕີມໃສ່ບັນດານະໂຍບາຍຕ່າງໆຂອງອົງການຈັດຕັ້ງໃຫ້ສົມບູນ ເຊັ່ນ ນະໂຍບາຍ ດ້ານຄຸນນະພາບ, ດ້ານສຸຂະອະນາໄມ, ດ້ານຄວາມປອດໄພ, ແລະ ຫຼັກການທີ່ເປັນໃຈກາງຂອງທຸລະກິດ.
- ຂອບເຂດຂອງນະໂຍບາຍ ຕ້ອງກວມເອົາທຸກຂົງເຂດການປະຕິບັດວຽກງານຂອງອົງການຈັດຕັ້ງ, ຈາກການສະໜອງວັດຖຸດິບ ຈົນເຖິງການຜະລິດ ຫຼື ການບໍລິການຂັ້ນສຸດທ້າຍ.
- ນະໂຍບາຍຕ້ອງຖືກຮັບຮອງ ແລະ ສະໜັບສະໜູນ ໂດຍຜູ້ຈັດການລະດັບສູງ ຜູ້ທີ່ຄວນເປັນແບບຢ່າງໃນການນຳພາການລິເລີ່ມການສ້າງນະໂຍບາຍດ້ານສິ່ງແວດລ້ອມ.
- ນະໂຍບາຍຕ້ອງໄດ້ຮັບການປັບປຸງໃຫ້ແທດເໝາະ-ທັນສະໄໝກັບແຕ່ລະໄລຍະ.
- ຕ້ອງເຮັດໃຫ້ລູກຈ້າງ ມີຄວາມຮັບຮູ້, ເຂົ້າໃຈຢ່າງຈະແຈ້ງຕໍ່ເນື້ອໃນ ແລະ ຄວາມມຸ້ງຫວັງຂອງນະໂຍບາຍດ້ານສິ່ງແວດລ້ອມ.
- ເພື່ອສົ່ງເສີມຄວາມຮັບຮູ້ຕໍ່ນະໂຍບາຍນີ້, ຄວນມີການເຜີຍແຜ່ ພາຍໃນອົງການຈັດຕັ້ງ, ອຳນວຍຄວາມສະດວກເພື່ອໃຫ້ສາທາລະນະຊົນຮັບຮູ້ໃນເມື່ອມີຄວາມຕ້ອງການ ຫຼື ມີຄວາມສະມັກໃຈໃນການປະຕິບັດ.